ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຍທຂ PWT

ກະຊວງໂຍທາທິການ ແລະ ຂົນສົ່ງ

ເລກທີ ..266.... /ຍທຂ

ນະຄອນຫຼວງວຽງຈັນ, ວັນທີ. . 11. ເມສາ. 2020

# ບົດແນະນຳ

## ສຳລັບການຂົນສົ່ງສິນຄ້າ ພາຍໃນປະເທດ ແລະ ເຂົ້າ - ອອກ ສປປ ລາວ ໃນໄລຍະການປ້ອງກັນ, ຄວບຄຸມ ແລະ ແກ້ໄຂການລະບາດຂອງພະຍາດໂຄວິດ-19

ເຖິງ: - ທ່ານ ຫົວໜ້າພະແນກ ໂຍທາທິການ ແລະ ຂົນສົ່ງ ແຂວງ, ນະຄອນຫຼວງວຽງຈັນ

- ຜູ້ປະກອບການ ຂົນສົ່ງສິນຄ້າ, ຈັດສົ່ງສິນຄ້າ ພາຍໃນປະເທດ, ລະຫວ່າງປະເທດ ແລະ ຜ່ານແດນ

ເລື່ອງ: ບົດແນະນຳສຳລັບການຂົນສົ່ງສິນຄ້າ ພາຍໃນປະເທດ ແລະ ເຂົ້າ - ອອກ ສປປ ລາວ ໃນໄລຍະການປ້ອງກັນ, ຄວບຄຸມ ແລະ ແກ້ໄຂການລະບາດຂອງພະຍາດໂຄວິດ-19

- ອີງຕາມ ຄຳສັ່ງຂອງນາຍົກລັດຖະມົນຕີ ສະບັບເລກທີ 06/ນຍ, ລົງວັນທີ 29/03/2020 ວ່າດ້ວຍການເພີ່ມທະວີມາດຕະການສະກັດກັ້ນ, ກັນການລະບາດ, ຄວບຄຸມ ແລະ ກຽມຄວາມພ້ອມຮອບດ້ານເພື່ອຕ້ານພະຍາດ COVID-19.
- ອີງຕາມ ບົດແນະນຳ ສະບັບເລກທີ 020/ສພກ, ລົງວັນທີ 02/04/2020 ວ່າດ້ວຍ ການຜັນຂະຫຍາຍຄຳສັ່ງຂອງນາຍົກລັດຖະມົນຕີ ວ່າດ້ວຍການເພີ່ມທະວີມາດຕະການສະກັດກັ້ນ, ກັນການລະບາດ, ຄວບຄຸມ ແລະ ກຽມຄວາມພ້ອມຮອບດ້ານເພື່ອຕ້ານພະຍາດໂຄວິດ-19;
- ອີງຕາມ ຂໍ້ຕົກລົງ ວ່າດ້ວຍການແບ່ງຄວາມຮັບຜິດຊອບພາຍໃນ ຂອງຄະນະສະເພາະກິດເພື່ອປ້ອງກັນ, ຄວບຄຸມ ແລະ ແກ້ໄຂການລະບາດຂອງພະຍາດ COVID-19 ເລກທີ 023/ສພກ, ລົງວັນທີ 06/04/2020.
- ອີງຕາມ ແຈ້ງການຂອງ ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ສະບັບເລກທີ 461/ຫສນຍ, ລົງວັນທີ 08/04/2020;

ເພື່ອຜັນຂະຫຍາຍ ແລະ ຮັບປະກັນໃຫ້ແກ່ການຈັດຕັ້ງປະຕິບັດຄຳສັ່ງ, ຄຳແນະນຳ ແລະ ແຈ້ງການຕ່າງໆ ກ່ຽວກັບ ການກວດກາ ແລະ ອຳນວຍຄວາມສະດວກໃນການຂົນສົ່ງສິນຄ້າພາຍໃນ ແລະ ສິນຄ້າ ເຂົ້າ-ອອກປະເທດ ໃຫ້ມີປະສິດທິຜົນ ແລະ ເປັນເອກະພາບກັນໃນຂອບເຂດທົ່ວປະເທດ, ລັດຖະມົນຕີ ກະຊວງ ໂຍທາທິການ ແລະ ຂົນສົ່ງ ອອກບົດແນະນຳເພີ່ມເຕີມ ດັ່ງນີ້:

### I. ການຂົນສົ່ງສິນຄ້າພາຍໃນປະເທດ

ສຳລັບສິນຄ້າພາຍໃນປະເທດ, ຄົນຂັບລົດຂົນສົ່ງສິນຄ້າ ທີ່ເຄື່ອນຍ້າຍຢູ່ພາຍໃນປະເທດ ໂດຍຜ່ານ ບັນດາ ເມືອງ, ແຂວງ, ນະຄອນຫຼວງ ລວມທັງ ຄົນຂັບລົດຂົນສົ່ງເຖິງທີ່ (Door to Door delivery) ສາມາດຂົນສົ່ງສິນຄ້າ ແລະ ອາຫານ ໄປຮອດ ປາຍທາງ ຫຼື ລູກຄ້າ ໄດ້ຢ່າງເປັນປົກກະຕິ ໂດຍໃຫ້ໃສ່ຜ້າປິດປາກ ຕະຫຼອດເວລາ ພ້ອມທັງ

ຕ້ອງຮັບການກວດກາອຸນ ຫະພູມ ກັບທີ່ ຈາກເຈົ້າໜ້າທີ່ສາທາລະນະສຸກ ຕາມເສັ້ນທາງ ຢ່າງເຂັ້ມງວດ. ຖ້າບໍ່ມີອາການສົງໄສ ແມ່ນໃຫ້ອໍານວຍຄວາມສະດວກ ໃນການຂົນສົ່ງສິນຄ້າ ດັ່ງກ່າວ ໃຫ້ສາມາດໄປ ເຖິງປາຍທາງໂດຍໄວ. ຖ້າພົບເຫັນອາການສົງໄສ ແມ່ນໃຫ້ປະຕິບັດ ຕາມມາດຕະການເຝົ້າລະວັງ ຕາມທີ່ເຈົ້າໜ້າທີ່ສາທາລະນະສຸກ ກໍານົດໄວ້;

## II. ການຂົນສົ່ງສິນຄ້າ ລະຫວ່າງປະເທດ ແລະ ຜ່ານແດນ

1. **ກໍລະນີທີ່ 1:** ສໍາລັບສິນຄ້າທົ່ວໄປ, ຄົນຂັບລົດຕ່າງປະເທດທີ່ຂົນສົ່ງສິນຄ້າ ທີ່ມາຈາກຕ່າງປະເທດເຂົ້າມາດິນແດນຂອງ ສປປ ລາວ ຕ້ອງປະຕິບັດຕາມມາດຕະການ ທີ່ກະຊວງອຸດສາຫະກໍາ ແລະ ການຄ້າ ແລະ ກະຊວງສາທາລະນະສຸກ ກໍານົດ ເປັນຕົ້ນແມ່ນ ຕ້ອງໃສ່ຜ້າປິດປາກດັງ ແລະ ໄດ້ຜ່ານການຢັ້ງຢືນ ການກວດສຸຂະພາບ ຂອງເຈົ້າໜ້າທີ່ສາທະລະນະສຸກ ຈາກປະເທດຕົ້ນທາງ, ເຈົ້າໜ້າທີ່ ສາທະລະນະສຸກຢູ່ ດ່ານເບື້ອງລາວ ຈຶ່ງອະນຸຍາດໃຫ້ເຂົ້າມາໄດ້. ສ່ວນສິນຄ້າ ຕ້ອງໄດ້ຄ່ຽນຖ່າຍ ຢູ່ຈຸດຄ່ຽນຖ່າຍທີ່ ເຈົ້າໜ້າທີ່ກໍານົດຢູ່ເບື້ອງລາວ, ພາຍຫຼັງເອົາສິນຄ້າລົງແລ້ວ ໃຫ້ກັບຄືນ ໂດຍໄວ;

2. **ກໍລະນີທີ່ 2:** ລົດຕ່າງປະເທດທີ່ຂົນສົ່ງສິນຄ້າ ນໍາເຂົ້າເພື່ອມາຮັບໃຊ້ໂຄງການ ເຊັ່ນ ໂຄງການ ທາງດ່ວນ, ທາງລົດໄຟ ລາວ-ຈີນ, ເຂື່ອນໄຟຟ້າ, ສິນຄ້າທາດແຫລວ ຫຼື ວັດຖຸໄວໄຟ ທີ່ບໍ່ສາມາດຄ່ຽນຖ່າຍ ແລະ ອື່ນໆ ແລະ ລົດຂົນສົ່ງນໍ້າມັນ ແມ່ນອະນຸຍາດໃຫ້ ລົດຂົນສົ່ງ ແລະ ຄົນຂັບລົດຕ່າງປະເທດ ສາມາດໄປສົ່ງຮອດສະໜາມ ຫລື ສາງນໍ້າມັນເລີຍ ແຕ່ຕ້ອງປະຕິບັດບັນດາມາດຕະການ ດັ່ງນີ້:
   1) ຕ້ອງມີເປົ້າໝາຍນໍາສົ່ງສິນຄ້າ, ມີໜັງສືຢັ້ງຢືນຂອງເຈົ້າຂອງສິນຄ້າ ຫຼື ຕົວແທນຢູ່ລາວ ຫຼື ເຈົ້າຂອງໂຄງການ ໂດຍກໍານົດຈຸດ ດ່ານນໍາເຂົ້າ ຫາ ປາຍທາງ;
   2) ແຈ້ງເສັ້ນທາງຂົນສົ່ງ ຕໍ່ເຈົ້າໜ້າທີ່ ຢູ່ຈຸດກວດກາຕາມເສັ້ນທາງ;
   3) ຜູ້ຂົນສົ່ງສາມາດເດີນທາງໄປຕາມເປົ້າໝາຍທີ່ກໍານົດໃຫ້ເທົ່ານັ້ນ ແລະ ບໍ່ອະນຸຍາດໃຫ້ເດີນທາງອອກຈາກເປົ້າໝາຍທີ່ກໍານົດ;
   4) ສໍາລັບ ຄົນຂັບລົດຂົນສົ່ງສິນຄ້າ ທີ່ມີຄວາມຈໍາເປັນ ຄ້າງຄືນ ຫຼື ຫຼາຍກວ່າ 1 ວັນ ບໍລິສັດຜູ້ຈັດສົ່ງ ຫຼື ບໍລິສັດຕົວແທນ ຫຼື ເຈົ້າຂອງສິນຄ້າ ຫຼື ເຈົ້າຂອງໂຄງການ ຕ້ອງໃຫ້ຄົນຂັບລົດ ພັກເຊົາ, ກິນຢູ່ແບບແຍກປ່ຽວ ໃນລົດຂົນສົ່ງ ຫຼື ຫ້ອງພັກຢູ່ຫ້ອງຂັບລົດ ຫຼື ຂອບເຂດລົດຂົນສົ່ງ ເທົ່ານັ້ນ ພ້ອມທັງມີມາດຕະການປ້ອງກັນ ການລະບາດຂອງພະຍາດ ຕາມມາດຕະຖານ ທີ່ກະຊວງສາທາລະນະສຸກ ກໍານົດໄວ້ ຢ່າງເຂັ້ມງວດ. ໃນກໍລະນີ ຄົນຂັບລົດ ມີຄວາມຈໍາເປັນຢຸດພັກຕາມເສັ້ນທາງ ເພື່ອທຸລະຕ່າງໆຢູ່ ປ້ຳນໍ້າມັນ, ຈຸດພັກລົດ ແລະ ອື່ນໆ, ຕ້ອງມີມາດຕະການ ປ້ອງກັນຕົນເອງ ຢ່າງເຂັ້ມງວດ ເຊັ່ນດຽວກັນ;
   5) ເພື່ອຮັບປະກັນຕໍ່ຄວາມຮັບຜິດຊອບ ໃນການຈັດຕັ້ງປະຕິບັດປຶກແນະນໍານີ້ໃຫ້ໄດ້ຮັບຜົນດີ ມອບໃຫ້ເຈົ້າໜ້າທີ່ປະຈໍາດ່ານ ເຊັນບົດບັນທຶກຢັ້ງຢືນກັບ ຜູ້ຂັບລົດ, ເຈົ້າຂອງສິນຄ້າ ຫຼື ເຈົ້າຂອງ ໂຄງການ ໄວ້ເປັນຫຼັກຖານຕື່ມ.

3. **ກໍລະນີທີ່ 3:** ການຂົນສົ່ງສິນຄ້າຜ່ານດິນແດນຂອງ ສປປ ລາວ ເພື່ອຈະໄປປະເທດທີ່ສາມ. ສໍາລັບຂາເຂົ້າ, ລົດຂົນສົ່ງ ຕ່າງປະເທດ ຕ້ອງມາຄ່ຽນຖ່າຍສິນຄ້າ ໃສ່ລົດຂົນສົ່ງຂອງລາວຢູ່ຈຸດຄ່ຽນຖ່າຍທີ່ເຈົ້າໜ້າທີ່ກໍານົດ. ສໍາລັບຂາອອກ, ລົດຂົນສົ່ງຂອງລາວ ຂົນສົ່ງຕໍ່ໄປຍັງຊາຍແດນ ເພື່ອຄ່ຽນຖ່າຍໃສ່ລົດຕ່າງປະເທດ ຂອງປະເທດທີ່ສາມ ຫຼື ນໍາໃຊ້ ລົດຂົນສົ່ງຂອງລາວ ຂົນຕໍ່ຮອດປາຍທາງ ໃນກໍລະນີປະເທດກ່ຽວຂ້ອງອະນຸມັດ. ສ່ວນຄົນຂັບລົດ ທີ່ເປັນຄົນຕ່າງປະເທດ ກໍ່ຕ້ອງຜ່ານການກວດສຸຂະພາບ ຕາມກໍລະນີ ທີ່ກ່າວມາຂ້າງເທິງ ຢ່າງເຄັ່ງຄັດ.

III. ສຳລັບຜູ້ປະກອບການຂົນສົ່ງ:

1) ຜູ້ປະກອບການຂົນສົ່ງ ຕ້ອງທຳຄວາມສະອາດສະຖານທີ່ຂອງບໍລິສັດ ແລະ ເພີ່ມຄວາມຖີ່ໃນການທຳຄວາມສະອາດ ເຊັ່ນ ສີດຢາອະເຊື້ອ ພາຍໃນຫ້ອງຂັບລົດ ແລະ ຕູ້ບັນຈຸສິນຄ້າ ກ່ອນການບັນຈຸສິນຄ້າໃສ່ລົດແຕ່ລະຄັ້ງ;

2) ມີບັນທຶກ ການກວດກາສະພາບທາງດ້ານຮ່າງກາຍຂອງຄົນຂັບລົດປະຈຳວັນ ດ້ວຍເຄື່ອງກວດອຸນຫະພູມຮ່າງກາຍ;

3) ຜູ້ປະກອບການຂົນສົ່ງ ຕ້ອງມີມາດຕະການໃນການແກ້ໄຂເຫດການສຸກເສີນ ເຊັ່ນ ກໍລະນີທີ່ພົບ ພະນັກງານຂອງຕົນມີອຸນຫະພູມ ຜິດປົກກະຕິຕາມການແນະນຳຂອງກະຊວງສາທາລະນະສຸກ ຕ້ອງປ່ຽນຄົນຂັບລົດ;

4) ເອົາໃຈໃສ່ແນະນຳ ພະນັກງານທຸກຄົນ ລ້າງມືດ້ວຍສະບູ, ເຫຼົ້າ, ເຈວ ຫຼື ຢາຂ້າເຊື້ອ ເປັນປົກກະຕິ ໂດຍການຕິດຕັ້ງຈຸດລ້າງມືໃຫ້ ລູກຄ້າ, ຄົນຂັບລົດ, ລວມທັງພະນັກງານ ຕາມຈຸດຕ່າງໆ ຂອງສຳນັກງານທີ່ມີຄວາມສະດວກ ແລະ ປອດໄປ່ງ;

5) ໃຫ້ຄົນຂັບລົດ ຖືໃບຂັບຂີ່, ບັດປະຈຳຕົວ ແລະ ເອກະສານປະຈຳລົດ ຕະຫຼອດເວລາ ເພື່ອອຳນວຍຄວາມສະດວກ ໃນການກວດກາຂອງໜ້າທີ່ ຕາມເສັ້ນທາງ;

6) ໃຫ້ຄົນຂັບລົດ ໃສ່ຜ້າປິດປາກຕະຫຼອດເວລາ ໃນເວລາເຮັດວຽກ ຫຼື ເດີນທາງ.

IV. ສຳລັບຄົນຂັບລົດຂົນສົ່ງ:

1) ຕ້ອງຖືໃບຂັບຂີ່, ບັດປະຈຳຕົວ ແລະ ເອກະສານປະຈຳລົດ ຕະຫຼອດເວລາ ເພື່ອອຳນວຍຄວາມ ສະດວກ ໃນການກວດກາຂອງເຈົ້າໜ້າທີ່ ຕາມເສັ້ນທາງ;

2) ຕ້ອງໃສ່ຜ້າປິດປາກດັງຕະຫຼອດເວລາ ໃນເວລາເຮັດວຽກ ຫຼື ເດີນທາງ;

3) ເອົາໃຈໃສ່ ສວມຜ້າປິດປາກດັງ ໃນເວລາເດີນທາງ ແລະ ຫຼີກລ້ຽງການໃຊ້ມືສຳຜັດ ປາກ, ຕາ ແລະ ດັງ;

4) ໝັ່ນລ້າງມືດ້ວຍ ນ້ຳ ແລະ ສະບູ ຫຼື ເຫຼົ້າ ທີ່ມີຄວາມເຂັ້ມສູງກວ່າ 75 ອົງສາ;

5) ຫຼີກລ້ຽງການເຂົ້າໄປສະຖານທີ່ງຄົນແອອັດ ຫຼື ສຳຜັດກັບບຸກຄົນອື່ນ ໃນເວລາປະຕິບັດໜ້າທີ່, ປະຕິບັດໄລຍະຫ່າງ ຢ່າງໜ້ອຍ 1 ແມັດ.

V. ຂໍ້ຫ້າມ ແລະ ມາດຕະການຕໍ່ຜູ້ລະເມີດ

1. ຫ້າມລົດຂົນສົ່ງສິນຄ້າ ມີຄົນຂັບລົດ ເກີນ 2 ຄົນ ຫຼື ຄົນຂັບລົດ 1 ຄົນ ແລະ ພະນັກງານຕິດຕາມ 1 ຄົນ;

2. ຫ້າມບໍ່ໃຫ້ ເຈົ້າໜ້າທີ່ ຫຼື ພາກສ່ວນໃດ ເກັບເງິນຈາກລົດຂົນສົ່ງສິນຄ້າ ຢູ່ດ່ານກວດກາຕ່າງໆ ຕາມເສັ້ນທາງ;

3. ຜູ້ທີ່ລະເມີດ ບົດແນະນຳສະບັບນີ້ ຈະຖືກປະຕິບັດວິໄນ ຕາມກົດໝາຍຂອງ ສປປ ລາວ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອໃຫ້ປະຕິບັດນັບແຕ່ມື້ລົງລາຍເຊັນສະບັບນີ້ເປັນຕົ້ນໄປ.

ລັດຖະມົນຕີ

ບ່ອນສົ່ງ:

- ຄະນະສະເພາະກິດ ເພື່ອປ້ອງກັນ, ຄວບຄຸມ ແລະ ແກ້ໄຂການລະບາດຂອງພະຍາດ COVID-19 ຂັ້ນນະຄອນຫຼວງ ແລະ ບັນດາແຂວງ



ສັນຕິສຸກ ສິມມາລາວົງ